# ສໍ ສີ

"ເລື່ອງຂອງສໍ"

ຫຼົງທາງໃນເມກ

ຖ້າວັນໜຶ່ງ

ພໍ່ແມ່ເຈົ້າເຖົ້າ

ຄຳນຳ







ລ້ານຊ້າງ ປະກັນໄພ
Lane Xang Assurance



# ການແຂ່ງຂຽນບົດໃນຫົວຂໍ້: "ເວລາພັກແລ້ງຂອງນ້ອງ"

ຈຸດປະສົງ: ເພື່ອເປັນການສົ່ງເສີມໃຫ້ນ້ອງໆນັກຮຽນ ຄົ້ນຄວ້າໂລກພາຍນອກ ໃນໄລຍະພັກພາກຮຽນປີ 2012 ນີ້.

ຄະນະບັນນາທິການ "ວາລະສານ ສໍສີ" ຈະໄດ້ຈັດການແຂ່ງຂັນຂຽນບົດໃນຫົວຂໍ້ "ເວລາພັກແລ້ງຂອງນ້ອງ" ຂຶ້ນ.

ເນື້ອໃນ: ເລົ່າເຖິງຄວາມຊົງຈຳອັນດີງາມທີ່ສຸດໃນໄລຍະພັກພາກຮຽນຂອງນ້ອງໆນັກຮຽນທັງຫຼາຍ.

ສົ່ງເສີມ: ບົດທີ່ມີຄວາມຄິດສ້າງສັນ, ມີຄວາມປະທັບໃຈ.

ເປົ້າໝາຍ: ບັນດານ້ອງໆນັກຮຽນປະຖົມ ແລະ ມັດທະຍົມທົ່ວປະເທດ.

ກຳນົດໄລຍະເວລາສົ່ງບົດ: 30/5/2012 ເຖິງ 30/7/2012

ຮູບແບບການສົ່ງບົດ:

1. ທາງໄປສະນີ: ຂຽນຊື່ນາມສະກຸນ, ເບີໂທລະສັບ, ທີ່ຢູ່ຕິດຕໍ່, (ອີເມລ-ຖ້າມີ)



2. ຕາມທີ່ຢູ່ອີເມລຂອງຄະນະບັນນາທິການ

ເວລາມອບລາງວັນ: ມື້ເປີດສົກຮຽນໃໝ່.

ລາງວັນລວມມີ:

ລາງວັນທີໜຶ່ງ 1 ລາງວັນ: ຮັບວາລະສານ ສໍສີ ຟຣີ 1 ປີ ແລະ ຂອງຂວັນຈາກກອງບັນນາທິການ

ລາງວັນທີສອງ 1 ລາງວັນ: ຮັບວາລະສານ ສໍສີຟຣີ 6 ເດືອນ ແລະ ຂອງຂວັນຈາກກອງບັນນາທິການ

ລາງວັນທີສາມ 1 ລາງວັນ: ຮັບວາລະສານ ສໍສີຟຣີ 3 ເດືອນ ແລະ ຂອງຂວັນຈາກກອງບັນນາທິການ

ລາງວັນຊົມເຊີຍ 5 ລາງວັນ: ຮັບວາລະສານ ສໍສີຟຣີ 2 ເດືອນ ແລະ ຂອງຂວັນຈາກກອງບັນນາທິການ

ບົດຂຽນທີ່ສົ່ງມາຈະໄດ້ທະຍອຍລົງໃນວາລະສານສໍສີໃນແຕ່ລະເດືອນ ແລະ ຈະໄດ້ຮັບຄານາມປາກກາຕາມການກຳນົດຂອງ ວາລະສານສໍສີ.

ບົດຂຽນສົ່ງໄປທີ່: butchimau2012@gmail.com

# ຄຳນຳ

ຮຽນບັນດາທ່ານຄູອາຈານທີ່ເຄົາລົບ ແລະ ນ້ອງໆນັກຮຽນທີ່ຮັກແພງ!

ຊີວິດໃນໄວຮຽນແມ່ນໄລຍະເວລາທີ່ງົດງາມທີ່ສຸດ, ໄຮ້ດຽງສາ, ບໍລິສຸດສົດໃສທີ່ສຸດຂອງຊີວິດຄົນເຮົາ. ເມື່ອເຮົານຶກເຖິງໂຮງຮຽນແມ່ນຄິດເຖິງສະຖານທີ່ ທີ່ເຕັມໄປດ້ວຍຄວາມຊົງຈຳ, ບໍ່ວ່າທຸກ ຫຼື ສຸກໃນສະໄໝທີ່ຍັງເປັນນັກຮຽນ.

ເຖິງແນວໃດກໍຕາມ, ຊີວິດໃນໄວຮຽນກໍແມ່ນໄລຍະເວລາທີ່ຕ້ອງການການແນະນຳວິຖີທາງການດຳເນີນຊີວິດ, ເປັນໄລຍະຊີວິດທີ່ຕ້ອງການພື້ນຖານທີ່ໜາແໜ້ນທາງດ້ານແນວຄວາມຄິດໃນການດຳລົງຊີວິດ ເພື່ອກ້າວສູ່ການໃຊ້ຊີວິດໃນສັງຄົມ.

ດ້ວຍຄວາມມຸ່ງຫວັງທີ່ຈະເຮັດໃຫ້ໂລກນີ້ເຕັມໄປດ້ວຍສີສັນ, ນຳສິ່ງດີໆມີຄຸນປະໂຫຍດ, ມີຄວາມໝາຍມາໃຫ້ນ້ອງໆນັກຮຽນ, ປຶ້ມວາລະສານ “ສໍສີ” ຈຶ່ງໄດ້ເກີດຂຶ້ນ. ກອງບັນນາທິການຫວັງຢ່າງຍິ່ງວ່າຈະໄດ້ຮັບການຕອບຮັບຂອງບັນດາຄູອາຈານ ແລະ ນ້ອງໆ ນັກຮຽນໝົດທຸກຄົນ.

ໃນແຕ່ລະຄໍລຳລ້ວນແລ້ວແຕ່ມີລັກສະນະພິເສດສະເພາະ, ຊຶ່ງມີທັງການແບ່ງປັນ ແລະ ແລກປ່ຽນ, ພົບປະໂອ້ລົມກັບຄູອາຈານ: ສົນທະນາຕົ້ນອາທິດຈົບຮອດບົດຮຽນແບບງ່າຍໆ, ຂອງຂວັນຂອງການດຳລົງຊີວິດ, ການເປີດໃຈ, ຂໍ້ສົງໃສກ່ຽວກັບບັນຫາສຸຂະພາບ, ສະພາບຈິດໃຈທີ່ປ່ຽນແປງໃນແຕ່ລະສ່ຳອາຍຸ. ວາລະສານຈະນຳສະເໜີເນື້ອໃນຕ່າງໆທີ່ກ່າວມານັ້ນຜ່ານບົດເລື່ອງສັ້ນ, ກະທັດຮັດ ແລະ ເຂົ້າໃຈງ່າຍ.

ພວກເຮົາມີຄວາມສຸກຫຼາຍເມື່ອຄິດວ່າ, ຄວາມຕ້ອງການທາງດ້ານຈິດໃຈຂອງນ້ອງໆທີ່ໄດ້ຖືກບອກເລົ່າແບບຄົບຖ້ວນຜ່ານວາລະສານທີ່ເປັນປຶ້ມສຳລັບພວກນ້ອງສະເພາະ. ພວກເຮົາຫວັງວ່າເນື້ອໃນຕ່າງໆຂອງວາລະສານນີ້ຈະປະກອບສ່ວນໃນການຮຽນຮູ້ ແລະ ຮັບຮູ້ຂອງນ້ອງໆກ່ຽວກັບສິ່ງຕ່າງໆທີ່ປະກົດຂຶ້ນອ້ອມຂ້າງພວກເຮົາ.



ວາລະສານ “ສໍສີ” ເປັນວາລະສານລາຍເດືອນ.

ຂໍໃຫ້ຄູອາຈານ ແລະ ນ້ອງໆນັກຮຽນຈົ່ງມີແຕ່ຄວາມມ່ວນຊື່ນ!



ຜູ້ຂຽນບົດ: ເອື້ອຍສໍສີບົວ

# "ເລື່ອງຂອງສໍ"



ຕັ້ງແຕ່ເກີດມາ, ສໍກ້ານໜຶ່ງມີຄວາມຢາກຮູ້ຢາກເຫັນ ແລະ ສົງໄສຢູ່ສະເໝີວ່າຊີວິດການເປັນຢູ່ ນອກໂຮງງານຜະລິດສໍຈະເປັນແນວໃດ ເພາະວ່າບາງຄັ້ງຄາວລາວກໍໄດ້ຍິນຊ່າງເຮັດສໍເຂົາເຈົ້າລົມກັນ. ສໍຮູ້ສຶກກັງວົນຢູ່ຕະຫຼອດເວລາ, ເພາະອ້າຍນ້ອງຂອງລາວກໍບໍ່ຮູ້ຫຍັງຫຼາຍກວ່າລາວເລີຍ. ໃນທີ່ສຸດ, ມື້ກ່ອນທີ່ຈະຖືກນໍາອອກໄປວາງຂາຍຢູ່ຕາມຮ້ານຄ້າ, ສໍໄດ້ຖາມນາຍຊ່າງວ່າຕົນເອງກັບອ້າຍນ້ອງຂອງລາວຈະເປັນແນວໃດເມື່ອໄປດໍາລົງຊີວິດໃນສັງຄົມພາຍນອກທີ່ກວ້າງໃຫຍ່ນັ້ນ.

ຊ່າງເຮັດສໍຍິ້ມແລ້ວເວົ້າວ່າ:

- ມີ 5 ສິ່ງທີ່ທ່ານ ແລະ ອ້າຍນ້ອງຂອງທ່ານຄວນຈົດຈໍາເມື່ອກ້າວສູ່ຊີວິດໃນສັງຄົມໃຫຍ່. ຖ້າທ່ານຈື່ ແລະ ເຮັດໄດ້ທ່ານຈະກາຍເປັນສໍທີ່ດີທີ່ສຸດ.

1. ທ່ານຈະສາມາດເຮັດສິ່ງມະຫັດສະຈັນໄດ້ໂດຍສະເພາະແມ່ນຕອນທີ່ທ່ານຢູ່ໃນມືຂອງໃຜຄົນໜຶ່ງ ແລະ ຊ່ວຍເຂົາເຮັດວຽກ.

2. ທ່ານຈະຮູ້ສຶກເຈັບປວດເວລາທີ່ຖືກແຫຼມ, ແຕ່ຕ້ອງເປັນແນວນັ້ນທ່ານຈຶ່ງຈະດີຂຶ້ນກວ່າເກົ່າ ແລະ ສາມາດເຮັດວຽກຕໍ່ໄດ້.

3. ຖ້າທ່ານຫາກຂຽນຜິດ, ທ່ານຈົ່ງຈື່ໄວ້ສະເໝີຕ້ອງຂຽນໃຫ້ມັນຖືກຕ້ອງ.

4. ສິ່ງສໍາຄັນທີ່ສຸດສໍາລັບທ່ານ ແລະ ຄົນທີ່ນໍາໃຊ້ທ່ານ ບໍ່ແມ່ນສີທາຢູ່ພາຍນອກຕົວທ່ານ, ແຕ່ແມ່ນສິ່ງທີ່ຢູ່ໃນໂຕຂອງທ່ານເດີ.

5. ແລະສຸດທ້າຍ, ບໍ່ວ່າໃນສະຖານະການໃດ, ທ່ານຕ້ອງສືບຕໍ່ຂຽນຕໍ່ໄປ. ເພາະນັ້ນແມ່ນຊີວິດຂອງທ່ານ, ເຖິງວ່າທ່ານຈະປະເຊີນກັບບັນຫາທີ່ຫຍຸ້ງຍາກແນວໃດກໍ່ຕາມ, ທ່ານກໍຕ້ອງຂຽນຢ່າງສະອາດ, ຈະແຈ້ງ, ແລະ ສ້າງຄວາມປະທັບໃຈໃຫ້ຕົນ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ